# ກາທັມມະຈັກຣ໌



ຄຳອະທິບາຍໂດຍອີງຕາມຄວາມເຂົ້າໃຈຂອງອ້າຍເອງ ແລະອີງໃສ່ຄວາມໝາຍໃນພຣະໄຕຣ ປິດົກ ສະບັບສຳລັບປະຊາຊົນພິມເປັນພາສາໄທ ພິມຄັ້ງທີ ໑໑ ປີ ພສ. ໒໕໓໘ ພ້ອມທັງ ປຶ້ມສາຣານຸກົມ ອີສານ-ໄທ-ອັງກິດ ຈັດທຳໂດຍ ດຣ. ປຣີຊາ ພິນທອງ ພິມປີ ພສ. ໒໕໓໘ (ຄສ. ໑໙໙໕)

ຄຳວ່າ,"ກາ" ຫລື "ຕຣາ" ແປວ່າເຄື່ອງໝາຍ

ຄຳວ່າ, "ຈັກຣ" ແປວ່າ ກົງລໍ້ ຄຳວ່າ, "ທັມມະ" ແປວ່າ ທັມ ຫລືໃນທີ່ນີ້ ແມ່ນ "ມັກຄະທັມ ທີ່ພຣະພຸດທະເຈົ້າເທດສະໜາຄັ້ງທຳອິດໃນພາກສ່ວນຂອງອະຣິຍະສັດສີ່ ໃຫ້ແກ່ເຫລົ່າປັນຈະວັກຄີທັງຫ້າ." (ອະຣິຍະສັດສີ່ມີ: ທຸກ, ສະມຸໄທ, ນິໂຣດ ແລະມັກຄ໌)

ໃນກາທັມມະຈັກຂອງສ້າງຄຣູນີ້ ເຮົາອາດຈະແປໄດ້ວ່າ, "ກົງລໍ້ ຄືທັມມະ" ຫລື "ກົງລໍ້ແຫ່ງສິນທັມ" ຊຶ່ງໃນນັ້ນ ພວກເຮົາຈະເຫັນພາຍໃນກົງລໍ້ນັ້ນ ມີຢູ່ ແປດຫລັກ ຊຶ່ງມີຄວາມໝາຍວ່າ, ມັກຄະແປດ.

ຊຶ່ງຄຳສອນໃນມັກຄະແປດນັ້ນກໍມີດັ່ງນີ້:

໑. ສັມມາທິຖິ- ຄວາມເຫັນຊອບ **(Right View)F**

໒. ສັມມາສັງກັບປະ- ຄວາມຄຶດຊອບ **(Right Thought)F**

໓. ສັມມາວາຈາ- ການເຈຣະຈາຊອບ **(Right Speech)F**

໔. ສັມມາກັມມັນຕະ- ການກະທຳຊອບ **(Right Action)F**

໕. ສັມມາອາຊີວະ- ການລ້ຽງຊີບຊອບ **(Right Livelihood)F**

໖. ສັມມາວາຍາມະ- ຄວາມພຽນຊອບ **(Right effort)F**

໗. ສັມມາສະຕິ- ການຕັ້ງສະຕິຊອບ **(Right Mindfulness)F** ແລະ

໘. ສັມມາສະມາທິ- ການຕັ້ງໃຈໝັ້ນຊອບ **(Right Concentration).**

ດັ່ງນັ້ນ ເມື່ອຮວມທັງໝົດເຂົ້າມາ ແລະຕີຄວາມໝາຍໃສ່ຕົວຈິງແລ້ວ ກາທັມມະຈັກຂອງສ້າງຄຣູກໍມີຄວາມໝາຍວ່າ, "ກາແຫ່ງສິລທັມທີ່ນຳໄປສູ່ການກະທຳຊອບ". ຄຣູມີການີ້ ກໍເພາະວ່າພວກເຮົາຮັກສາສິລທັມຮອງລົງມາຈາກສາມະນະເພດ. ເວົ້າຢ່າງງ່າຍໆ, ນາຍຄຣູ ຕ້ອງເປັນຄົນທີ່ຢູ່ໃນສິລ ທັມ. ອັນນີ້ແມ່ນຄວາມໝາຍໂດຍອີງຕາມຄວາມເຂົ້າໃຈຂອງຂ້ອຍເອງ. ບາງທີຜູ້ທີ່ເປັນອາຈານທັງຫລາຍອາດຈະໃຫ້ຄວາມກະຈ່າງ ແຈ້ງກວ່ານີ້. ຂໍໃຫ້ທຸກຄົນຈົ່ງສອບຖາມຫາຄວາມຈິງຕໍ່ໆໄປ.